ສຳນັກງານ ຄຄຊ
ຮັບ ເລກທີ 1288
ວັນທີ 21 NOV 2017
ໂທລະສັບ 021 [illegible]

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ: 55 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 20 ພະຈິກ 2017

## ບົດບັນທຶກກອງປະຊຸມ
## ສ່ອງແສງວຽກງານສາຍລັດ ປະຈຳເດືອນ ຕຸລາ ປີ 2017

ໃນຕອນເຊົ້າຂອງວັນທີ 09 ພະຈິກ 2017 ເວລາ 8:30 ໂມງ ຢູ່ທີ່ຫ້ອງປະຊຸມໃຫຍ່ຊັ້ນ IV, ທະນາຄານແຫ່ງ ສປປ ລາວ ໄດ້ຈັດກອງປະຊຸມສ່ອງແສງສາຍລັດ ປະຈຳເດືອນ ຕຸລາ 2017 ພາຍໃຕ້ການເປັນປະທານຂອງ ທ່ານ ສົມພາວ ໄຟສິດ ຜູ້ວ່າການ ທຫລ ໂດຍມີບັນດາຄະນະກົມ ແລະ ຄະນະອຳນວຍການທະນາຄານທຸລະກິດລັດເຂົ້າຮ່ວມ (ດັ່ງລາຍຊື່ຄັດຕິດມາພ້ອມນີ້). ພ້ອມນີ້, ກອງປະຊຸມແມ່ນໄດ້ຮັບຟັງການລາຍງານຜົນການຈັດຕັ້ງປະຕິບັດວຽກງານຂອງບັນດາກົມ ແລະ ທະນາຄານທຸລະກິດລັດ ໃນໄລຍະ 1 ເດືອນຜ່ານມາ ຊຶ່ງຕີລາຄາໄດ້ຫຼາຍບັນຫາ ເປັນຕົ້ນ:

ການຈັດຕັ້ງປະຕິບັດວຽກງານວິຊາສະເພາະຂອງບັນດາກົມ ແລະ ທະນາຄານທຸລະກິດລັດ ແມ່ນໄດ້ຮັບຜົນສຳເລັດເປັນຢ່າງດີ ເຊິ່ງສະແດງອອກແຕ່ລະດ້ານຄື: ສຳເລັດການຄົ້ນຄວ້າດັດປັບການຄຸ້ມຄອງອັດຕາດອກເບ້ຍເງິນຝາກ ຂອງທະນາຄານທຸລະກິດ, ປັບປຸງການເກັບຄ່າທຳນຽມຂອງທະນາຄານທຸລະກິດ, ປັບປຸງອັດຕາສ່ວນຕ່າງເງິນກູ້ແລະເງິນຝາກເປັນເງິນຕາຕ່າງປະເທດ. ໄດ້ອອກແຈ້ງການເຖິງກະຊວງອຸດສາຫະກຳ ແລະ ການຄ້າ ກ່ຽວກັບການແອບອ້າງຂອງທະນາຄານເຊັນຊາ ທີ່ບໍ່ໄດ້ຮັບອະນຸຍາດສ້າງຕັ້ງຈາກ ທຫລ ແລະ ສຳເລັດການຈັດພິທີມອບ-ຮັບລົດປະຊາສຶກສາທາງດ້ານການເງິນ ເພື່ອໃຫ້ຄວາມຮູ້ທາງດ້ານການເງິນໃຫ້ແກ່ມວນຊົນ. ໄດ້ອອກແຈ້ງການເຖິງພໍ່-ແມ່ປະຊາຊົນ ແລະ ຊາວຄ້າ-ຂາຍ ຫ້າມນຳເອົາເງິນໃບນ້ອຍໄປວາງຂາຍຢູ່ຕະຫຼາດ. ດຳລັດວ່າດ້ວຍການປົກປ້ອງເງິນຝາກ ໄດ້ຖືກຮັບຮອງຈາກທ່ານ ນາຍົກລັດຖະມົນຕີ ເຊິ່ງປະຈຸບັນຢູ່ໃນຂັ້ນຕອນກະກຽມລົງຈົດໝາຍເຫດ. ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ແລະ ກະຊວງການເງິນ ສຳເລັດການລົງນາມວ່າດ້ວຍການເກັບອາກອນຄ່າທຳນຽມທາງ ໂດຍຜ່ານທະນາຄານການຄ້າຕ່າງປະເທດລາວມະຫາຊົນ; ທະນາຄານສົ່ງເສີມກະສິກຳ ແລະ ບໍລິສັດເອີນແອນຢັງ ສຳເລັດການລົງນາມວ່າດ້ວຍການຄຸ້ມຄອງຕາມຫຼັກການບາເຊວ II. ຄົ້ນຄວ້າ ແລະ ປັບປຸງສະພາບໍລິຫານ ຢູ່ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ທະນາຄານພັດທະນາລາວ.

ຜ່ານການຮັບຟັງການລາຍງານ ເຫັນວ່າແຕ່ລະພາກສ່ວນ ຕັ້ງໜ້າສຸມໃສ່ຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນຕາມການມອບໝາຍເປັນຢ່າງດີ ແລະ ເພື່ອສືບຕໍ່ວຽກງານໃຫ້ໄດ້ຮັບຜົນສຳເລັດໃນຕໍ່ໜ້າແມ່ນຕ້ອງໄດ້ເອົາໃຈໃສ່ບັນຫາຕ່າງໆດັ່ງນີ້:

1. ຕິດພັນກັບຂໍ້ສະເໜີຂອງພາກສ່ວນຕ່າງໆ: (ກ) ໂຮງພິມທະນະບັດ ກ່ຽວກັບການສະເໜີຊື້ອຸປະກອນຮັບໃຊ້ວຽກງານໂຮງພິມທີ່ຂຶ້ນໄວ້ປີ 2015 ແລະ ຂໍປັບປຸງ-ຟື້ນຟູຄືນເຄື່ອງຈັກເກົ່າຂອງໂຮງພິມ ເພື່ອສ້າງລາຍຮັບໃຫ້ແກ່ທະນາຄານແຫ່ງ ສປປ ລາວ ແມ່ນໃຫ້ສົມທົບກັບຫ້ອງການ ທຫລ. (ຂ) ສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້ ກ່ຽວກັບການມອບ-ຮັບຊັບສິນບັດຢູ່ຂົວທ່າງ່ອນ ແມ່ນໃຫ້ສໍາເລັດໃນທ້າຍປີ 2017 ແລະ ສໍາລັບບັນຫາຂອງວິທະຍາໄລບຸດວິເສດ ແມ່ນໃຫ້ຊຸກຍູ້ພາກສ່ວນກ່ຽວຂ້ອງປະກາດຂາຍຊັບສິນ ເພື່ອຊໍາລະໜີ້ໃຫ້ແກ່ທະນາຄານ. (ຄ) ທະນາຄານນະໂຍບາຍ ກ່ຽວກັບການສະເໜີຂໍປຸກສໍານັກງານໃໝ່ ເຊິ່ງປະຈຸບັນແມ່ນຍັງມີຂໍ້ຈໍາກັດຫຼາຍດ້ານ ແຕ່ຄວນກໍານົດຢ່າງຈະແຈ້ງຕໍ່ກັບແຫຼ່ງທຶນທີ່ຈະນໍາມາໃຊ້ນັ້ນເພື່ອບໍ່ໃຫ້ຖືກຕໍານິ. ພ້ອມນີ້, ໃຫ້ສົມທົບກັບຫ້ອງການທະນາຄານແຫ່ງ ສປປ ລາວ ເພື່ອກວດກາຄືນແຜນການກໍ່ສ້າງພື້ນຖານ-ໂຄງລ່າງ.

2. ວຽກງານສຸມໃສ່ໃນຕໍ່ໜ້າ:

- ໃຫ້ເອົາໃຈໃສ່ວຽກງານຮັກສາສະຖຽນລະພາບທາງດ້ານມະຫາພາກໃຫ້ໜັກແໜ້ນ.
- ມອບໃຫ້ຫ້ອງການ ອອກແຈ້ງການເຖິງບັນດາກົມ ແລະ ທຽບເທົ່າກົມພາຍໃນ ທຫລ ເພື່ອສະຫຼຸບຜົນການຈັດຕັ້ງປະຕິບັດວຽກງານປະຈໍາປີ 2017 ແລະ ແຜນການປະຈາປີ 2018.
- ສໍາລັບການກະກຽມສະເຫຼີມສະຫຼອງວັນຊາດ ຄົບຮອບ 42 ປີ ແມ່ນບໍ່ຢາກໃຫ້ແຕ່ລະພາກສ່ວນຈັດຕັ້ງປະຕິບັດໃນລັກສະນະຟຸມເຟືອຍ ແຕ່ຈັດຕັ້ງປະຕິບັດໃນລັກສະນະກະທັດຮັດ ແລະ ມີເນື້ອໃນເພື່ອປະຕິບັດຕາມເນື້ອໃນຈິດໃຈຂອງດໍາລັດວ່າດ້ວຍການປະຢັດຂອງທ່ານນາຍົກລັດຖະມົນຕີ.
- ໃຫ້ກົມພົວພັນສາກົນ ກະກຽມເງື່ອນໄຂຕ່າງໆໃຫ້ແກ່ການເຄື່ອນໄຫວວຽກງານການພົວພັນຕ່າງປະເທດໃນກອບການຮ່ວມມືຕ່າງໆ ໃຫ້ສໍາເລັດຮອບດ້ານ.
- ຕິດພັນກັບສໍານັກງານຄຸ້ມຄອງຕະຫຼາດຫັກຊັບ ແມ່ນເອົາໃຈໃສ່ຄົ້ນຄວ້າ ແລະ ຊຸກຍູ້ 2 ບໍລິສັດເປົ້າໝາຍທີ່ມີແຜນຈະເຂົ້າຕະຫຼາດ ໃຫ້ສາມາດຈົດທະບຽນໃນຕະຫຼາດຫຼັກຊັບໄດ້ ແລະ ເປົ້າໝາຍອື່ນໆພ້ອມ.
- ວຽກງານຄະນະສະເພາະກິດ ທີ່ຕິດພັນກັບການແກ້ໄຂບັນຫາຂອງບໍລິສັດ ພີເອັສ ແມ່ນໃຫ້ສືບຕໍ່ຈັດຕັ້ງປະຕິບັດ ຫາກພົບເຫັນບັນຫາໃດ ແມ່ນບໍ່ໃຫ້ນິ້ງນອນໃຈ ແລະ ສະເໜີໃຫ້ກົມຄຸ້ມຄອງສະຖາບັນການເງິນ ຖ້າຫາກມີສະຖາບັນການເງິນໃດທີ່ເຄື່ອນໄຫວບໍ່ດີ ແມ່ນໃຫ້ປະຕິບັດຕາມລະບຽບ. ພ້ອມນີ້, ໃຫ້ເປັນເຈົ້າການຄົ້ນຄວ້າ ສໍາລັບບໍລິສັດທີ່ສະເໜີຂໍສ້າງຕັ້ງສະຖາບັນການເງິນກ່ອນອອກແຈ້ງການໂຈະຊື່ວຄາວກ່ຽວກັບການອອກໃບອະນຸຍາດດໍາເນີນທຸລະກິດສະຖາບັນການເງິນ ຢູ່ ສປປ ລາວ ໃນຮູບແບບຕ່າງໆນັ້ນ ໂດຍເຊີນບໍລິສັດໃດທີ່ຍັງບໍ່ເຂົ້າໃຈນັ້ນ ມາຍັງກົມກ່ຽວຂ້ອງເພື່ອຊີ້ແຈງ ແລະ ແນະນໍາໃຫ້ເຂົ້າໃຈກ່ຽວກັບຂັ້ນຕອນການປະກອບເອກະສານຕ່າງໆຢ່າງລະອຽດ.
- ຄະນະຮັບຜິດຊອບຮ່າງກົດໝາຍວ່າດ້ວຍການຊໍາລະ ໃຫ້ຄະນະກ່ຽວຂ້ອງປັບປຸງກົດໝາຍດັ່ງກ່າວຕາມເນື້ອໃນຈິດໃຈຂອງສະພາແຫ່ງຊາດ ເພື່ອປະກາດໃຊ້ຕາມລະບຽບກົດໝາຍ.
- ສືບຕໍ່ກະກຽມຄວາມພ້ອມຮອບດ້ານໃຫ້ແກ່ການຈັດກອງປະຊຸມສະພາບໍລິຫານ ເປັນຕົ້ນ: ບັນດາເອກະສານທີ່ຈະນໍາເຂົ້າຜ່ານກອງປະຊຸມດັ່ງກ່າວ.

- ຕິດພັນກັບການແກ້ໄຂອ່ອຍໜີ້ 3 ແຈ ແມ່ນໃຫ້ກົມບໍລິການທະນາຄານ ເປັນເຈົ້າການຮັບຮ້ອມສັງລວມ ແລະ ວິເຄາະລະອຽດ ກ່ຽວກັບບັນດາໂຄງການທີ່ຈະອ່ອຍໜີ້ 3 ແຈນັ້ນ ໂດຍສົມທົບກັບພາກສ່ວນກ່ຽວຂ້ອງ ແລ້ວລາຍງານຄະນະນຳ ທຫລ.

ກອງປະຊຸມໄດ້ປິດລົງໃນເວລາ 11:45 ໂມງ ຂອງພາກເຊົ້າວັນດຽວກັນ.

| ປະທານກອງປະຊຸມ | ຜູ້ບັນທຶກກອງປະຊຸມ |
| --- | --- |
| ດຣ ສີມພາວ ໄຟສິດ | ພອນລະໄມ ພະໄຊ |